ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----=====000=====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 19 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 17 JUN 2021

**ແຈ້ງການ**

**ເຖິງ: ຕະຫຼາດຫຼັກຊັບລາວ, ບັນດາສະຖາບັນສື່ກາງດ້ານຫຼັກຊັບ ແລະ ບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວ.**

**ເລື່ອງ: ນະໂຍບາຍ ແລະ ມາດຕະການຈັດຕັ້ງປະຕິບັດ ສຳລັບຂະແໜງການຕະຫຼາດທຶນ ເພື່ອຫຼຸດຜ່ອນຜົນກະທົບຈາກການລະບາດຂອງພະຍາດໂຄວິດ 19 (COVID-19).**

- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກະກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ ໂຄວິດ 19 (COVID-19) ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021.

ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ຂໍແຈ້ງມາຍັງ ຕະຫຼາດຫຼັກຊັບລາວ, ບັນດາສະຖາບັນສື່ກາງດ້ານຫຼັກຊັບ ແລະ ບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ຊາບວ່າ: ໃນໄລຍະການແຜ່ລະບາດຂອງພະຍາດອັກເສບປອດ ຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ທີ່ແກ່ຍາວ ແລະ ສ້າງຜົນກະທົບເປັນວົງກວ້າງ ຕໍ່ລະບົບເສດຖະກິດ ແລະ ສັງຄົມ ເຊິ່ງລັດຖະບານກໍ່ໄດ້ມີການກຳນົດນະໂຍບາຍ ແລະ ມາດຕະການຈັດຕັ້ງປະຕິບັດຕ່າງໆ ເພື່ອຫຼຸດຜ່ອນຜົນກະທົບຈາກການລະບາດຂອງເຊື້ອພະຍາດດັ່ງກ່າວ ແນໃສ່ເຮັດໃຫ້ບັນຍາກາດຂອງການດຳເນີນທຸລະກິດສາມາດສືບຕໍ່ເຄື່ອນໄຫວວຽກງານໃນໄລຍະນີ້ໄດ້ ພ້ອມທັງ ເປັນການສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ລົງທຶນ.

ດັ່ງນັ້ນ, ຄຄຊ ຈຶ່ງຂໍແຈ້ງມາຍັງທຸກພາກສ່ວນຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ເອົາໃຈໃສ່ໃນການຈັດຕັ້ງປະຕິບັດມະຕິຄຳສັ່ງຂອງລັດຖະບານ ຢ່າງເຄັ່ງຄັດ ເປັນຕົ້ນ ການຈັດສັນພະນັກງານມາປະຈຳການ ເພື່ອບໍ່ໃຫ້ແອອັດ, ການປະຊຸມຜ່ານຊ່ອງທາງເອເລັກໂຕຣນິກ ແລະ ຫຼີກລ້ຽງການໄປສະຖານທີ່ຊຸມນຸມ. ພ້ອມດຽວກັນນີ້, ຄຄຊ ໄດ້ມີນະໂຍບາຍ ແລະ ມາດຕະການສຳລັບຂະແໜງຕະຫຼາດທຶນ ແລະ ການຍົກເວັ້ນບາງເນື້ອໃນ ທີ່ໄດ້ກຳນົດໃນລະບຽບການກ່ຽວກັບວຽກງານຫຼັກຊັບ ໃນໄລຍະການແຜ່ລະບາດຂອງພະຍາດອັກເສບປອດ ຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ດັ່ງລາຍລະອຽດລຸ່ມນີ້:



ຄະນະກຳມະການຄຸ້ມຄອງຫຼັກຊັບ, ບ້ານໂພນສະອາດ, ໜ່ວຍ 20, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
ຕູ້ໄປສະນີ 19 ໂທລະສານ : (856)-21-217806 ໂທລະສັບ : (856)-21-217770 E-mail : lsco@lsc.gov.la

**I. ສຳລັບສະຖາບັນສື່ກາງດ້ານຫຼັກຊັບ**

1. ບໍລິສັດຫຼັກຊັບ

- ຍົກເວັ້ນການປະຕິບັດມາດຕາ 13 ຂໍ້ 3 ຂອງລະບຽບວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວຂອງບໍລິສັດຫຼັກຊັບ ສະບັບເລກທີ 002/ຄຄຊ, ລົງວັນທີ 24 ກໍລະກົດ 2013 ໂດຍການເລື່ອນເວລາການຈ່າຍຄ່າທຳນຽມຄຸ້ມຄອງປະຈຳປີ 2021 ທີ່ຕ້ອງຊຳລະພາຍໃນໄຕມາດ I ຂອງປີຖັດໄປ ມາເປັນໄຕມາດ II ຂອງປີຖັດໄປ;
- ຍົກເວັ້ນການປະຕິບັດມາດຕາ 09 ຂໍ້ 2, 3 ແລະ 4 ຂອງລະບຽບວ່າດ້ວຍການລາຍງານ ສະບັບເລກທີ 373/ສຄລຕ, ລົງວັນທີ 24 ກຸມພາ 2012 ໂດຍການເລື່ອນການປະຕິບັດພັນທະການລາຍງານ ອອກໄປ 45 ວັນລັດຖະການ ນັບແຕ່ມື້ກຳນົດສົ່ງການລາຍງານເປັນຕົ້ນໄປ.

2. ບໍລິສັດກວດສອບ

- ຍົກເວັ້ນການປະຕິບັດມາດຕາ 22 ຂໍ້ 3 ຂອງຂໍ້ຕົກລົງວ່າດ້ວຍການບັນຊີ ແລະ ການກວດສອບກ່ຽວກັບວຽກງານຫຼັກຊັບ ສະບັບເລກທີ 12/ຄຄຊ, ລົງວັນທີ 29 ພຶດສະພາ 2017 ໂດຍການເລື່ອນເວລາການຈ່າຍຄ່າທຳນຽມຄຸ້ມຄອງປະຈຳປີ 2021 ທີ່ຕ້ອງຊຳລະພາຍໃນ ເດືອນ ມັງກອນ ຂອງປີຖັດໄປ ມາເປັນໄຕມາດ II ຂອງປີຖັດໄປ;
- ຍົກເວັ້ນການປະຕິບັດມາດຕາ 13 ແລະ 14 ຂອງລະບຽບວ່າດ້ວຍການລາຍງານ ສະບັບເລກທີ 373/ສຄລຕ, ລົງວັນທີ 24 ກຸມພາ 2012 ໂດຍການເລື່ອນການປະຕິບັດພັນທະການລາຍງານ ອອກໄປ 45 ວັນລັດຖະການ ນັບແຕ່ມື້ກຳນົດສົ່ງການລາຍງານເປັນຕົ້ນໄປ.

3. ບໍລິສັດປະເມີນມູນຄ່າຊັບສິນ

- ຍົກເວັ້ນການປະຕິບັດມາດຕາ 16 ຂໍ້ 3 ຂອງລະບຽບວ່າດ້ວຍການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ ສະບັບເລກທີ 003/ຄຄຊ, ລົງວັນທີ 08 ທັນວາ 2015 ໂດຍການເລື່ອນເວລາການຈ່າຍຄ່າທຳນຽມຄຸ້ມຄອງປະຈຳປີ 2021 ທີ່ຕ້ອງຊຳລະພາຍໃນໄຕມາດ I ຂອງປີຖັດໄປ ມາເປັນໄຕມາດ II ຂອງປີຖັດໄປ;
- ຍົກເວັ້ນການປະຕິບັດມາດຕາ 15 ຂໍ້ 1 ແລະ 2 ຂອງລະບຽບວ່າດ້ວຍ ການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ ສະບັບເລກທີ 003/ຄຄຊ ລົງວັນທີ 08 ທັນວາ 2015 ໂດຍການເລື່ອນການປະຕິບັດພັນທະການລາຍງານ ອອກໄປ 45 ວັນລັດຖະການ ນັບແຕ່ມື້ກຳນົດສົ່ງການລາຍງານເປັນຕົ້ນໄປ.

4. ບໍລິສັດຈັດອັນດັບຄວາມໜ້າເຊື່ອຖື

- ຍົກເວັ້ນການປະຕິບັດມາດຕາ 13 ຂໍ້ 3 ຂອງລະບຽບວ່າດ້ວຍການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຈາກຕ່າງປະເທດ ສະບັບເລກທີ 002/ຄຄຊ, ລົງວັນທີ 8 ທັນວາ 2015 ໂດຍການເລື່ອນເວລາການຈ່າຍຄ່າທຳນຽມຄຸ້ມຄອງປະຈຳປີ 2021 ທີ່ຕ້ອງຊຳລະພາຍໃນໄຕມາດ I ຂອງປີຖັດໄປ ມາເປັນໄຕມາດ II ຂອງປີຖັດໄປ;
- ຍົກເວັ້ນການປະຕິບັດມາດຕາ 12 ຂໍ້ 1 ແລະ ຂໍ້ 2 ຂອງລະບຽບວ່າດ້ວຍການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຈາກຕ່າງປະເທດ ສະບັບເລກທີ 002/ຄຄຊ, ລົງວັນທີ 8 ທັນວາ 2015 ໂດຍການເລື່ອນການປະຕິບັດພັນທະການລາຍງານ ອອກໄປ 45 ວັນລັດຖະການ ນັບແຕ່ມື້ກຳນົດສົ່ງການລາຍງານ ເປັນຕົ້ນໄປ.

5. ທະນາຄານດູແລຊັບສິນ

- ຍົກເວັ້ນການປະຕິບັດມາດຕາ 11 ຂໍ້ 3 ຂອງຂໍ້ຕົກລົງວ່າດ້ວຍການຮັບຮອງການເຄື່ອນໄຫວຂອງທະນາຄານດູແລຊັບສິນ ສະບັບເລກທີ 016/ຄຄຊ, ລົງວັນທີ 28 ມິຖຸນາ 2019 ໂດຍການເລື່ອນເວລາການຈ່າຍຄ່າທຳນຽມຄຸ້ມຄອງປະຈຳປີ 2021 ທີ່ຕ້ອງຊຳລະພາຍໃນໄຕມາດ I ຂອງປີຖັດໄປ ມາເປັນໄຕມາດ II ຂອງປີຖັດໄປ.

**II. ສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ**

1. ເລື່ອນເວລາການປະຕິບັດມາດຕາ 43 ຂໍ້ 5 ແລະ ມາດຕາ 44 ຂໍ້ 3 ຂອງຂໍ້ຕົກລົງວ່າດ້ວຍການອອກຈຳໜ່າຍຮຸ້ນ (ສະບັບປັບປຸງ) ສະບັບເລກທີ 05/ຄຄຊ, ລົງວັນທີ 28 ມັງກອນ 2019 ກ່ຽວກັບການຊຳລະຄ່າທຳນຽມຄຸ້ມຄອງປະຈຳປີ 2022 ຈຳນວນ 10.000.000 ກີບ (ສິບລ້ານກີບຖ້ວນ) ສຳລັບບໍລິສັດຈົດທະບຽນ ທີ່ຕ້ອງຊຳລະພາຍໃນໄຕມາດ I ຂອງທຸກໆປີ ມາເປັນ ຊຳລະພາຍໃນໄຕມາດ II.

**III. ສິ່ງທີ່ຄວນເອົາໃຈໃສ່**

ໃຫ້ ຕລຊລ, ສະຖາບັນສື່ກາງດ້ານຫຼັກຊັບ ແລະ ບໍລິສັດຈົດທະບຽນ ເອົາໃຈໃສ່ບາງບັນຫາ ດັ່ງນີ້:

- ໃຫ້ ຕລຊລ ເອົາໃຈໃສ່ຕິດຕາມສະພາບການຊື້-ຂາຍຮຸ້ນຢ່າງໃກ້ຊິດ ເພື່ອໃຫ້ຜູ້ລົງທຶນມີຄວາມເຊື່ອໝັ້ນຕໍ່ການລົງທຶນໃນ ຕລຊລ ແລະ ທັງເປັນການປ້ອງກັນການສວຍໂອກາດໃນສະພາບວິກິດ ເພື່ອຊື້-ຂາຍຮຸ້ນໂດຍບໍ່ຍຸຕິທຳ ຫຼື ຕັດສິນໃຈເທຂາຍຮຸ້ນອອກເປັນຈຳນວນຫຼາຍ;
- ໃຫ້ ຕລຊລ ເອົາໃຈໃສ່ກວດກາ ແລະ ຕິດຕາມລະບົບການຊື້-ຂາຍ ແລະ ການຊຳລະສະສາງ ເພື່ອຮັບປະກັນຄວາມສະຖຽນຂອງລະບົບ;
- ໃຫ້ ຕລຊລ ສົມທົບກັບບັນດາບໍລິສັດຫຼັກຊັບ ໃນການໂຄສະນາ ແລະ ສ້າງບົດແນະນຳໃຫ້ສັງຄົມຮັບຮູ້ຢ່າງທົ່ວເຖິງ ກ່ຽວກັບການຊື້-ຂາຍຫຼັກຊັບຜ່ານ ລະບົບ Home Trading System ເພື່ອໃຫ້ຜູ້ລົງທຶນມີຄວາມເຂົ້າໃຈຕໍ່ຂັ້ນຕອນ ແລະ ວິທີການໃນການນຳໃຊ້ລະບົບດັ່ງກ່າວ ແລະ ເພື່ອເປັນອີກໜຶ່ງຊ່ອງທາງ ໃນການຫຼຸດຜ່ອນການອອກຈາກບ້ານ;
- ໃຫ້ບໍລິສັດຫຼັກຊັບ ດຳເນີນການແຈ້ງລູກຄ້າຂອງຕົນ ສຳລັບການສົ່ງຄຳສັ່ງຊື້-ຂາຍ ຕ້ອງສົ່ງຜ່ານທາງໂທລະສັບ, ແຟັກ, ອີເມວ ຫຼື ລະບົບຊື້-ຂາຍ Home Trading System;
- ສະຖາບັນສື່ກາງດ້ານຫຼັກຊັບ ຕ້ອງມີແຜນການຮອງຮັບການດຳເນີນທຸລະກິດໃຫ້ມີຄວາມຕໍ່ເນື່ອງ ເພື່ອຮັກສາໜ້າວຽກຫຼັກ ໃຫ້ສາມາດດຳເນີນງານໄປໄດ້ຢ່າງຕໍ່ເນື່ອງ ແລະ ຈັດໃຫ້ມີສູນແຈ້ງສາຍດ່ວນ ໃນກໍລະນີສຸກເສີນຕ່າງໆ ໃຫ້ກັບລູກຄ້າ ແລະ ພະນັກງານຂອງຕົນ;
- ສະຖາບັນສື່ກາງດ້ານຫຼັກຊັບ ຕ້ອງປະສານງານກັບພະນັກງານທີ່ກ່ຽວຂ້ອງໃນ ສຄຄຊ ຢ່າງໃກ້ຊິດ ແລະ ລາຍງານທັນທີ ກໍລະນີມີເຫດການຕ່າງໆ ເກີດຂຶ້ນທີ່ຮ້າຍແຮງຕໍ່ການດຳເນີນທຸລະກິດ ແລະ ການບໍລິການລູກຄ້າຂອງຕົນ ຫຼື ຕໍ່ວຽກງານຫຼັກຊັບໂດຍລວມ;
- ຕລຊລ, ສະຖາບັນສື່ກາງດ້ານຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງເອົາໃຈໃສ່ຈັດຕັ້ງປະຕິບັດບັນດາມາດຕະການປ້ອງກັນ COVID-19 ຢ່າງເຂັ້ມງວດ ໂດຍອີງຕາມມາດຕະການຕ່າງໆທີ່ຂັ້ນເທິງ ແລະ ຄະນະສະເພາະກິດ ໄດ້ກຳນົດອອກໃນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

**ຮອງປະທານຄະນະກຳມະການຄຸ້ມຄອງຫຼັກຊັບ**

**ສອນໄຊ ສິດພະໄຊ**